# Building and Keeping Good Credit (2009)

ໃບລາຍງານດັ່ງຕໍ່ໄປນີ້ ຈະອະທິບາຍກ່ຽວກັບປະວັດຂອງການຢືມເງິນ, ໜັງສືລາຍງານປະວັດຂອງການຢືມເງິນ, ວິທີຂໍເອົາໜັງສືລາຍງານປະວັດຂອງການຢືມເງິນ, ວິທີທີ່ຈະເລີ່ມຕົ້ນມີປະວັດຂອງການຢືມເງິນດີ ແລະ ໄປຕໍ່ວ່າກ່ຽວກັບບັນຫາການຢືມເງິນນຳໃຜແລະຢູ່ບ່ອນໃດ.

Table of Contents


- ປະວັດຂອງການຢືມເງິນ
- ເຄດິດດີ ປຽບກັບ ເຄດິດບໍ່ດີ
- ລາຍງານເຄດິດແມ່ນຫຍັງ
- ການຂໍເອົາເຄດິດເຮັດຢ່າງໃດແດ່?
- ເປັນຫຍັງທະນາຄານຈຶ່ງບໍ່ໃຫ້ເຄດິດຂ້ອຍ?
- ເມື່ອທາງທະນາຄານບໍ່ໃຫ້ເຄດິດ?
- ເລີ່ມຕົ້ນມີເຄດິດດີໄດ້ແບບໃດແດ່?
- ບັດເຄດິດຂ້ອຍບໍ່ມີປະກັນໄພ
- ການບໍຣິການບັດເຄດິດແບບພິເສດ
- ສິດທິຂອງທ່ານ
- ໄປຕໍ່ວ່ານຳໃຜແດ່


ປະວັດຂອງການຢືມເງິນຂອງທ່ານເປັນແບບໃດ?

ເວລາທ່ານຂໍຢືມເງິນກູ້ຢືມ ຫຼື ລົງທະບຽນເອົາບັດເຄດິດ, ທະນາຄານຕ່າງໆ ຈະເບິ່ງປະວັດຢືມເງິນຂອງທ່ານວ່າ ທ່ານສາມາດທົດແທນໜີ້ທີ່ທ່ານຢືມໄປນັ້ນ ໄດ້ຫຼືບໍ່. ຖ້າວ່າທ່ານບໍ່ເຄີຍຢືມເງິນຈາກທະນາຄານມາກ່ອນ ເຊັ່ນ ຂໍບັດເຄດິດ, ຂໍບັດເຄດິດຈາກຮ້ານຄ້າ, ເງິນກູ້ຢືມເພື່ອຊື້ຣົດຫຼືເຮືອນ, ທ່ານອາດຈະບໍ່ມີປະວັດຂອງການຢືມເງິນເລີຍ.

ປະວັດຂອງການຢືມເງິນທີ່ດີຈະຊ່ວຍທ່ານໃນເວລາ:

- ຊື້ເຮືອນ.
- ໄດ້ວຽກການເຮັດ.
- ເປີດບັນຊີທາງໂທຣສັບ, ຄ່າແກຊ໌ແລະໄຟຟ້າ ຫຼື ຄ່ານ້ຳແລະໄຟ.
- ເຊົ່າຫ້ອງຫຼືເຊົ່າເຮືອນຢູ່.
- ຊື້ເຄື່ອງຂອງໃຊ້ໃສ່ເຮືອນຕ່າງໆໂດຍທີ່ບໍ່ຕ້ອງເອົາເງິນສົດຈ່າຍ ເຊັ່ນ ໂຕະ, ຕັ່ງ, ຕູ້ເຢັນແລະອື່ນໆ.
- ຊື້ຣົດ.
- ຊື້ປະກັນໄພ.
- ຢືມເງິນກ້ອນໃຫຍ່.
- ຂໍເອົາບັດເຄດິດ.

## ປະວັດຂອງການຢືມເງິນດີ ປຽບກັບ ປະວັດຂອງການຢືມເງິນບໍ່ດີ

ຖ້າທ່ານເຄີຍມີບັດເຄດິດ ຫຼື ເຄີຍຢືມເງິນກູ້ຢືມມາກ່ອນ ແລະ ໃຊ້ໜີ້ສິນຕາມເວລາກຳນົດທຸກເທື່ອ, ທ່ານອາດຈະມີປະວັດຂອງການຢືມເງິນດີ ຍ້ອນວ່າ ທ່ານບໍ່ໄດ້ໃຊ້ບັດເຄດິດຢ່າງຟຸ້ມເຟືອຍ.

ບັນດາຜູ້ຄົນທີ່ມີປະວັດຂອງການຢືມເງິນດີນັ້ນແມ່ນ:

- ເປັນຜູ້ຄົນທີ່ມີເຄດິດມາກ່ອນແລ້ວ ແລະເຄີຍໄດ້ໃຊ້ບັດເຄດິດມາແລ້ວ.
- ຜູ້ຄົນພວກນີ້ ມີປະວັດທີ່ທົດແທນໜີ້ສິນຕາມເວລາ ຕາມກຳນົດວັນທີອີກ ແລະ ບໍ່ໃຊ້ເງິນຢືມກ່າຍເກີນງົບປະມານທີ່ທະນາຄານກຳນົດໄວ້ໃຫ້.
- ຜູ້ຄົນພວກນີ້ຈະຂໍຢືມເງິນທີ່ບໍ່ເກີນລາຍໄດ້ ແລະອີກຢ່າງນຶ່ງ ພວກເຂົາກໍ່ສາມາດທົດແທນໜີ້ໄດ້.

ເມື່ອທ່ານບໍ່ສາມາດທົດແທນໜີ້ຄືນໄດ້ ນັ້ນແລະຄືສິ່ງທີ່ຈະເຮັດໃຫ້ປະວັດຂອງການຢືມເງິນຂອງທ່ານບໍ່ດີ.

## ເຫດການທີ່ຈະເຮັດໃຫ້ທ່ານມີປະວັດຂອງການຢືມເງິນບໍ່ດີນັ້ນແມ່ນ:

- ທ່ານຈ່າຍບໍ່ທັນເວລາວັນທີກຳນົດ.
- ທ່ານຈ່າຍຕ່ຳກວ່າລາຍຈ່າຍທີ່ທະນາຄານກຳນົດ.
- ທ່ານມີບັດເຄດິດຫຼາຍທີ່ທ່ານໃຊ້ເງິນຢືມຈາກທະນາຄານແລະຈ່າຍໝົດຊື້ນທຸກໆບັດເຖິງແມ່ນວ່າທ່ານຈະຈ່າຍຕາມເວລາວັນທີກຳນົດກໍ່ຕາມ.
- ໜີ້ສິນທີ່ທ່ານຍັງບໍ່ທັນຈ່າຍໝົດຖືກລາຍງານສົ່ງໄປໃຫ້ບໍຣິສັດເງິນກູ້ຢືມຮູ້.
- ທ່ານຂໍການລົ້ມລະລາຍ.
- ມີໜັງສືຄຳສັ່ງຈາກສານໃຫ້ໂອນເງິນອອກຈາກລາຍໄດ້ເງິນເດືອນຂອງທ່ານເພື່ອເອົາໄປຈ່າຍໜີ້ສິນ.

## ລາຍງານປະວັດຂອງການຢືມເງິນແມ່ນຫຍັງ?

ລາຍງານປະວັດຂອງການຢືມເງິນຂອງທ່ານ ແມ່ນປະວັດຂອງການຢືມເງິນກູ້ຢືມ, ບັດເຄດິດ, ລາຍຈ່າຍຕ່າງໆ ແລະ ໜີ້ສິນທີ່ໄດ້ຈ່າຍອອກໄປໝົດແລ້ວ. ເຣື່ອງທຸກຢ່າງທີ່ມີໃນລາຍງານນີ້ແມ່ນມາຈາກການຢືມເງິນທີ່ທ່ານໄດ້ຂໍມາຈາກບໍຣິສັດການຄັງແລະທະນາຄານຕ່າງໆ.

ທະນາຄານພວກນີ້ ສົ່ງລາຍງານໄປໃຫ້ບໍຣິສັດທີ່ເກັບກຳເອົາປະວັດຂອງການຢືມເງິນຂອງແຕ່ລະຜູ້ຄົນທັງຫຼາຍໄວ້. ບໍຣິສັດພວກນີ້ແມ່ນເປັນທູຣະກິດທີ່ເກັບກຳເອົາປະວັດຂອງການຢືມເງິນຂອງລູກຄ້າຕ່າງໆຂອງທະນາຄານ. ບໍຣິສັດເກັບກຳເອົາປະວັດການຢືມເງິນເກັບຮັກສາລາຍງານດັ່ງກ່າວໄວ້ໃນບັນຊີໃນຄອມພິວເຕີ ແລະ ແຈ້ງໃຫ້ທະນາຄານຮູ້

ເມື່ອທ່ານລົງທະບຽນຂໍເອົາບັດເຄດິດໃໝ່ ຫຼື ເງິນກູ້ຢືມ. ບໍຣິສັດເກັບກຳເອົາປະວັດຂອງການຢືມເງິນບໍ່ໄດ້ໃຫ້ຄວາມຕົກລົງວ່າ ທ່ານຈະໄດ້ບັດເຄດິດຫຼືບໍ່.

ເມື່ອທ່ານລົງທະບຽນຂໍບັດເຄດິດ ຫຼື ຂໍຢືມເງິນກູ້ຢືມ ທາງທະນາຄານຈະໃຊ້ລາຍງານປະວັດຂອງການຢືມເງິນຂອງທ່ານເປັນຄຳຕັດສິນວ່າ ທ່ານເປັນຄົນທີ່ຮັບຜິດຊອບຫຼືບໍ່ທີ່ຈະສາມາດມີພາລະຈ່າຍໜີ້ເງິນຢືມເພີ້ມເຕີມອີກ.

## ລາຍງານປະວັດຂອງການຢືມເງິນມີດັ່ງນີ້:

- ການຈ່າຍໜີ້ສິນ ແມ່ນໜີ້ໃນປະຈຸບັນແລະໃນອະດີດ ແລະທ່ານໄດ້ຈ່າຍຕົງວັນເວລາຫຼືບໍ່ ຫຼືວ່າ ທ່ານຈ່າຍໜີ້ຊ້າຢູ່ເລື້ອຍໆ.
- ຍອດເງິນເຫຼືອໃນບັນຊີເງິນຂອງບັດເຄດິດແລະເງິນກູ້ຢືມນັ້ນ ດີຫຼືບໍ່ດີ
- ລາຍງານຕ່າງໆກ່ຽວກັບປະວັດຂອງການຢືມເງິນຂອງທ່ານ ເຊັ່ນ ການລົ້ມລະລາຍ ຫຼື ໜີ້ພາສີເຮືອນທີ່ຍັງບໍ່ທັນໄດ້ຈ່າຍຄືນຕ່າງໆ.
- ໜີ້ສິນທີ່ບໍ່ໄດ້ຈ່າຍຊ່ວຍຄ່າລ້ຽງລູກ.
- ບັນຊີຊື່ຂອງແຕ່ລະບໍຣິສັດທີ່ຂໍເອົາລາຍງານປະວັດຂອງການຢືມເງິນຂອງທ່ານ.

## ລາຍງານປະວັດຂອງການຢືມເງິນຂອງທ່ານຈະບໍ່ມີ:

- ລາຍງານກ່ຽວກັບ ຜິວພັນຂອງທ່ານ, ສາສນາ, ພັກການເມືອງ, ປະວັດການເຈັບໄຂ້, ການຢູ່ກິນແບບໃດ ແລະ ປະວັດຄອບຄົວ ແລະ ການທຳຜິດກົດໝາຍຕ່າງໆບາງໆ.

## ເຮັດຈັ່ງໃດຂ້ອຍຈິ່ງຊິໄດ້ລາຍງານປະວັດຂອງການຢືມເງິນຂອງຂ້ອຍ?

ຕາມກົດໝາຍຂອງຣັຖບານແລ້ວ ທຸກໆປີ ທ່ານສາມາດຂໍເອົາລາຍງານປະວັດຂອງການຢືມເງິນຂອງທ່ານໄດ້ ຈາກສາມບໍຣິສັດໃຫຍ່ທີ່ເກັບກຳເອົາປະວັດຂອງການຢືມເງິນຂອງທ່ານໄວ້. ບໍຣິສັດທັງສາມບໍຣິສັດນີ້ແມ່ນ:

- Experian: 888-397-3742 www.experian.com
- Equifax: 800-685-1111 www.equifax.com
- TransUnion: 800-916-8800 www.transunion.com

ສາມບໍຣິສັດພວກນີ້ໄດ້ສ້າງແວບໄຊຕ໌ຂຶ້ນທີ່ເອີ້ນວ່າ “Annual Credit Report” (www.annualcreditreport.com) ເພື່ອວ່າ ທ່ານສາມາດຂໍເອົາລາຍງານປະວັດຂອງການຢືມເງິນຂອງທ່ານໄດ້ ເຊິ່ງ ຣັຖບານມີກົດໝາຍອອກຄຳສັ່ງມາວ່າ ໃຫ້ທ່ານຂໍໄດ້ທຸກໆປີ. ທ່ານສາມາດຂໍເອົາລາຍງານປະວັດຂອງການຢືມເງິນໃນອອນໄລນ໌ໄດ້, ຫຼື ໂທທາງໂທຣະສັບທີ່ເລກ 877-322-8228 ຫຼື ຂື່ສານທາງໄປສະນີ. ຖ້າທ່ານຂື່ສານທາງໄປສະນີ ທ່ານຕ້ອງໄປເຂົ້າແວບໄຊຕ໌ ແລະກົດເອົາໃບທະບຽນ, ລົງທະບຽນ ແລະ ສົ່ງໄປຕາມທີ່ຢູ່ ເຊິ່ງມີໄວ້ໃຫ້ແລ້ວໃນແວບໄຊຕ໌.

ທ່ານມີສິດຂໍລາຍງານການຢືມເງິນຂອງທ່ານຈາກສາມບໍຣິສັດນີ້ໄດ້ ແລ້ວທ່ານຍັງສາມາດສັ່ງເອົາລາຍງານທັງໝົດພ້ອມກັນຈາກສາມບໍຣິສັດນີ້ ຫຼື ທ່ານຂໍເອົາຕ່າງມື້ຕ່າງເດືອນກໍ່ເປັນໄດ້. ຖ້າທ່ານຂໍເອົາລາຍງານປະວັດຂອງການຢືມເງິນໃນຕ່າງມື້ຕ່າງເດືອນ ທ່ານຈະໄດ້ຜົນປະໂຫຍດດີຕະລອດປີ ເຊິ່ງ ທ່ານບໍ່ຕ້ອງເສັຽເງິນເພີ້ມເຕີມໃນການຂໍສັ່ງເອົາລາຍງານອີກ.

ສິ່ງທີ່ທ່ານຕ້ອງເອົາໃຫ້ບໍຣິສັດພວກນີ້ຮູ້ໄວ້ ແມ່ນ:

- ຊື່ແທ້ຂອງທ່ານທັງໝົດ.
- ທີ່ຢູ່ປະຈຸບັນ ແລະ ທີ່ຢູ່ເກົ່າໆທີ່ທ່ານເຄີຍຢູ່ມາກ່ອນແລ້ວພາຍໃນສອງຫາຫ້າປີ.
- ເລກເຮັດວຽກ SS#.
- ວັນເດືອນປີເກີດ.
- ນາຍຈ້າງປະຈຸບັນ.
- ເລກໂທຣສັບ.

ລາຍງານຂອງທ່ານແມ່ນຟຣີຖ້າວ່າທ່ານຂໍເງິນຢືມບໍ່ໄດ້ພາຍໃນ 60 ມື້ ຕາມປະວັດຂອງການຢືມເງິນຂອງທ່ານ ຫຼື ທ່ານຖືກຄົນຂີ້ລັກມາຫຼອກລວງ.

## ເປັນຫຍັງທ່ານຈຶ່ງບໍ່ໄດ້ການຂໍຢືມເງິນ?

ບັນດາຜູ້ຄົນທັງຫຼາຍຂໍເອົາເງິນຢືມບໍ່ໄດ້. ຖ້າທ່ານຂໍບໍ່ໄດ້ ທາງທະນາຄານຕ້ອງຂຽນມາບອກໃຫ້ທ່ານຮູ້ວ່າ ເປັນຫຍັງທ່ານຈຶ່ງຂໍບໍ່ໄດ້. ຕາມທຳມະດາແລ້ວ, ທ່ານຂໍບໍ່ໄດ້ແມ່ນມີຢູ່ຫຼາຍປະເດັນ.

**ທ່ານບໍ່ມີປະວັດຂອງການຢືມເງິນເລີຍ**. ຖ້າທ່ານບໍ່ເຄີຍຢືມເງິນມາກ່ອນ ຫຼື ທ່ານຫາກໍ່ເລີ່ມໃຊ້ບັດເຄດິດ ຫຼື ທ່ານບໍ່ໄດ້ໃຊ້ບັດເຄດິດດົນມາແລ້ວ, ທາງທະນາຄານອາດຈະບໍ່ໃຫ້ທ່ານຢືມເງິນ ເພາະວ່າ ທ່ານບໍ່ມີປະວັດຂອງການຢືມເງິນ. ຖ້າທ່ານບໍ່ມີປະວັດຂອງການຢືມເງິນ, ທາງທະນາຄານຈະບໍ່ອາດຮູ້ໄດ້ວ່າ ທ່ານເປັນບຸກຄົນທີ່ເຊື່ອຖືໄດ້ແລະສາມາດທົດແທນໜີ້ເງິນຢືມໄດ້ຫຼືບໍ່.

ຖ້າວ່າທ່ານບໍ່ເຄີຍຢືມເງິນຫຼືບໍ່ໄດ້ໃຊ້ບັດເຄດິດດົນມາແລ້ວ, ທ່ານສາມາດເລີ່ມສ້າງປະວັດຂອງການຢືມເງິນໄດ້ເລີຍ ໂດຍເຂົ້າໄປເບິ່ງໃນ (“How can I established good credit?”)

**ທ່ານມີບັດເຄດິດຫຼາຍໂພດ**. ສ່ວນຫຼາຍ ທາງທະນາຄານບໍ່ມັກເອົາບັດເຄດິດໃຫ້ທ່ານຖ້າວ່າທ່ານມີບັດເຄດິດຫຼາຍ. ເມື່ອທະນາຄານເບິ່ງໃບສະມັກຂໍຢືມເງິນຂອງທ່ານ ທາງທະນາຄານຈະເບິ່ງລາຍໄດ້, ເງິນກູ້ຢືມປະຈຸບັນ ແລະການຈ່າຍໜີ້ສິນຂອງທ່ານ ເພື່ອຕັດສິນໃຈເອົາເງິນໃຫ້ທ່ານຢືມ. ທາງທະນາຄານຈະເບິ່ງເຣື່ອງລາວຕ່າງໆໃນແງທີ່ບໍ່ດີທີ່ສຸດ ເຊັ່ນ ຖ້າທ່ານໃຊ້ເງິນຢືມຈາກບັດໝົດທຸກບັດຈົນໝົດສັ້ງ ລາຍໄດ້ຂອງທ່ານສາມາດຈ່າຍໜີ້ຄືນໄດ້ຫຼືບໍ່? ຖ້າຄຳຕອບວ່າ “ບໍ່” ທ່ານກໍ່ຂໍຢືມເງິນບໍ່ໄດ້.

**ທ່ານຍັງບໍ່ໄດ້ສຳລະເຣື່ອງການໃຊ້ໜີ້ຄືນໃນອາດີ**. ເມື່ອທະນາຄານເອົາເງິນໃຫ້ທ່ານຢືມ ທ່ານບໍ່ໄດ້ສຳລະໜີ້ສິນຄືນໄດ້. ຖ້າທ່ານຈ່າຍໜີ້ຊ້າ, ບໍ່ໄດ້ຈ່າຍໜີ້ເງິນກູ້ຢືມຄືນ ຫຼື ຂໍລົ້ມລະລາຍ, ທາງທະນຄານຈະບໍ່ເອົາເງິນກູ້ຢືມໃຫ້ທ່ານຢືມ ຫຼື ບັດເຄດິດ. ຖ້າທ່ານຢາກໄດ້ເງິນຢືມ ທ່ານຕ້ອງແກ້ບັນຫາເຣື່ອງຕ່າງໆ ແລະໃຊ້ໜີ້ສິນຄືນຈົນໝົດກ່ອນ ໃນເວລາເປັນເດືອນໆ ຫຼື ເປັນປີ ຈົນກວ່າ ທາງທະນາຄານຈະເຊື່ອວ່າ ທ່ານເປັນຄົນຮັບຜິດຊອບ.

**ທ່ານຖືກຫຼອກລວງ**. ມີຫຼາຍເຫດການທີ່ເກີດຂື້ນມາແລ້ວທີ່ຄົນບໍ່ດີຈະລົງທະບຽນຂໍເອົາເຄດິດ ແລະໃຊ້ນາມຊື່ຂອງທ່ານທີ່ເອີ້ນວ່າ identity theft. ເມື່ອມີ identity theft ເກີດຂື້ນແກ່ທ່ານ ທ່ານກໍ່ຈະຮູ້ກ່ຽວກັບເຣື່ອງນີ້ຊ້າເກີນໄປວ່າ ມີຄົນອື່ນເອົາຊື່ຂອງທ່ານໄປຂໍເອົາເຄດິດ ເມື່ອທ່ານຈະຮູ້ໄດ້ກໍ່ເມື່ອທ່ານໄປລົງທະບຽນຂໍເອົາເຄດິດແລະຂໍເອົາບໍ່ໄດ້. ທ່ານບໍ່ແມ່ນຜູ້ຮັບຜິດ ຊອບໃນເຣື່ອງນີ້ ແຕ່ມັນກໍ່ຍັງເປັນເຣື່ອງທີ່ຈະແກ້ໄດ້ຍາກວ່າ ທາງທະນາຄານຈະເຊື່ອຫຼືບໍ່ວ່າ ທ່ານເປັນຄົນທີ່ມີຄວາມຮັບຜິດຊອບ.

ວິທີນຶ່ງທີ່ທ່ານສາມາດສະກັດກັ້ນບັນຫາເຣື່ອງນີ້ໄດ້ຄື ທ່ານຕ້ອງດຸມັນຕິດຕາມເບິ່ງການໃຊ້ຈ່າຍ ເງິນຢືມຂອງທ່ານ ຢ່າງໜ້ອຍເທື່ອນຶ່ງຕໍ່ປີ. ຖ້າທ່ານພົບເຫນບັນຊີທີ່ບໍ່ເຄີຍມີຫຼືທ່ານບໍ່ໄດ້ຂໍເປີດ ບັນຊີເງິນໃດໆເອງ ໂທໄປລາຍງານໃຫ້ອົງການລາຍງານປະວັດເຄດິດດ່ວນ. ແລ້ວພະຍາຍາມ ຕິດຕາມກວດເບິ່ງໃບລາຍງານຕ່າງໆທີ່ທະນາຄານສົ່ງມາໃຫ້.

## ເມື່ອທະນາຄານບໍ່ໃຫ້ເຄດິດຂ້ອຍເດ?

ທາງທະນາຄານຈະອະທິບາຍໃຫ້ທ່ານໄດ້ຊາບວ່າ ທ່ານຂໍເອົາເຄດິດບໍ່ໄດ້ນີ້ຍ້ອນຫຍັງ ແລະ ອົງການລາຍງານເຄດິດໃດທີ່ສົ່ງປະວັດຂອງການຢືມເງິນຂອງທ່ານໄປໃຫ້ທາງທະນາຄານຮູ້.

ຖ້າວ່າທາງທະນາຄານໄດ້ປະຕິເສັດໃບຂໍຢືມເງິນຂອງທ່ານ ທ່ານກໍ່ສາມາດຂໍລາຍງານມາເບິ່ງ ຈາກອົງການລາຍງານເຄດິດໄດ້ພາຍໃນ 60 ມື້. ຕິດຕໍ່ກັບອົງກັນລາຍງານເຄດິດທາງໂທຣສັບໄດ້.

ຖ້າວ່າທ່ານບໍ່ເຄີຍມີປະວັດຂອງການຢືມເງິນ ແລະທາງທະນາຄານບໍ່ເອົາເງິນໃຫ້ທ່ານຢືມຍ້ອນວ່າ ທ່ານບໍ່ເຄີຍມີປະວັດຂອງການຢືມເງິນມາກ່ອນ ແລະທ່ານຢາກໂທໄປຕໍ່ວ່າ ການໂທໄປຫາອົງການ ລາຍງານເຄດິດນັ້ນ ກໍ່ຈະບໍ່ໄດ້ຜົນຕອບມາເລີຍ.

ເມື່ອທ່ານໄດ້ເບິ່ງລາຍງານເຄດິດຢ່າງລະອຽດອ່ອນແລ້ວໆ ຖ້າວ່າທ່ານເຫັນມີບາງລາຍງານ ເບິ່ງຄືວ່າບໍ່ຖືກຕ້ອງ ທ່ານຄວນຕິດຕໍ່ອົງການລາຍງານເຄດິດດ່ວນ. ທ່ານມີສິດທີ່ທ່ານຈະແກ້ບັນຫາ ທີ່ອົງການລາຍງານເຄດິດລາຍງານມາແບບຜິດໆ. ການແກ້ບັນຫາເຣື່ອງນີ້ ເປັນວິທີທີ່ງ່າຍ ເພາະ ທ່ານສາມາດໂທໄປແກ້ໄດ້ກັບຜູ້ບໍຣິການເຣື່ອງເຫຼົ່ານີ້. ເລກໂທນັ້ນກໍ່ມີມາກັບໜັງສືລາຍງານເຄດິດ ນັ້ນແລະ.

ອົງການລາຍງານເຄດິດຈະຕິດຕໍ່ກັບທະນາຄານທີ່ລາຍງານກ່ຽວກັບການໃຊ້ຈ່າຍເງິນກູ້ຢືມຂອງ ທ່ານເອງກ່ຽວກັບການລາຍງານແບບຜິດໆ. ບັນຫາເຣື່ອງນີ້ ທາງອົງການລາຍງານເຄດິດກໍ່ ຈະລົບລ້າງອອກຈາກການລາຍງານຈົນກວ່າທາງສອງຝ່າຍຈະໄດ້ຮູ້ຄວາມຈິງ. ແຕ່ເມື່ອທາງ

ທະນາຄານໄດ້ຕອບມາວ່າ ການລາຍງານປະວັດຂອງການຢືມເງິນຂອງທ່ານແມ່ນຖືກຕ້ອງແລ້ວ ທ່ານມີສິດທີ່ຈະຂຽນໄປອະທິບາຍຍາວປະມານ100ຄໍາສັບ ແລະໃຫ້ເຫດຜົນແລະຂໍ້ອ້າງອີງຕ່າງໆ. ເວລາທ່ານໄປຂໍຢືມເງິນອີກ ທາງທະນາຄານກໍ່ຈະເບິ່ງຂໍ້ອະທິບາຍດັ່ງກ່າວຂອງທ່ານ.

## ເຮັດແນວໃດທີ່ຂ້ອຍຈະໄດ້ປະວັດເຄດິດດີ?

ມີຢູ່ສາມຢ່າງທີ່ທ່ານສາມາດເຮັດໃຫ້ປະວັດເຄດິດຂອງທ່ານດີ. ຖ້າທ່ານມີບັນຊີເງິນກູ້ຢືມ ແລະໃຊ້ບັດເຄດິດໃນຍາມຈໍາເປັນ ພາຍໃນສອງປີທ່ານກໍ່ຈະເລີ່ມມີປະວັດຂອງການຢືມເງິນດີ.

ໄປຖາມບໍຣິສັດໃນເຂດທຸຣະກິດໃກ້ໆໃກ້ບ່ອນຢູ່ຂອງທ່ານນັ້ນແລະ. ຖາມທະນາຄານທ່ານເອງ ແລະທະນາຄານເອກະຊົນຕ່າງໆ ຫຼື ຮ້ານຂັຍສິນຄ້າໃຫຍ່. ແລ້ວທ່ານຄວນບອກບໍຣິສັດທີ່ໃຫ້ບັດເຄດິດທ່ານໃຫ້ສົ່ງລາຍງານໄປໃຫ້ອົງການລາຍງານເຄດິດຕ່າງໆຮູ້ ເພື່ອວ່າ ທ່ານຈະໄດ້ເລີ່ມສ້າງປະວັດຂອງການຢືມເງິນ.

ມີຜູ້ເຊັນເອົາເຄດິດນໍາ. ຂໍໃຫ້ຍາດຕິພີ່ນ້ອງຫຼືໝູ່ຄູ່ທີ່ມີປະວັດເຄດິດດີ ໃຫ້ເປັນຜູ້ເຊັນເອົາເຄດິດນໍາທ່ານ. ຜູ້ເຊັນໃບຂໍຢືມເງິນນໍາທ່ານແມ່ນເປັນຄົນທີ່ໃຫ້ຄໍ້າປະກັນວ່າ ລາວຈະເປັນຜູ້ຈ່າຍໜີ້ແທນທ່ານຖ້າວ່າ ທ່ານບໍ່ສາມາດຈ່າຍໜີ້ສິນໄດ້. ຖ້າທ່ານບໍ່ຈ່າຍໜີ້ຕາມກໍານົດອັນເວລາ ທ່ານແລະຜູ້ເຊັນສັນຍານໍາກໍ່ຈະມີຜົນເສັຽຫາຍແກ່ປະວັດຂອງການຢືມເງິນ.

ຂໍເອົາບັດເຄດິດທີ່ມີຄໍ້າປະກັນ. ບັດເຄດິດທີ່ມີຄໍ້າປະກັນນີ້ດີສໍາລັບທ່ານໃນເວລາທີ່ທ່ານບໍ່ຈ່າຍໜີ້ສິນ ເພາະເງິນໃນທະນາຄານຂອງທ່ານສາມາດໂອນເຂົ້າໄປຈ່າຍໜີ້ເງິນຢືມໄດ້.

ສຶກສາເບິ່ງວ່າ ທະນາຄານໃຫ້ການຢືມເງິນແບບໃດດີກວ່າໝູ່. ທ່ານສາມາດປຽບທຽບກ່ຽວກັບເລື່ອງນີ້ໄດ້ໃນ ອິນເຕີແນດ www.bankrate.com. ກ່ອນທີ່ທ່ານຈະຂໍເອົາເງິນຢືມ ທ່ານຄວນຕິດຕາມເບິ່ງວ່າ ທະນາຄານໄດ້ສົ່ງລາຍລະອຽດໄປໃຫ້ອົງການລາຍງານເຄດິດຫຼືບໍ່. ເມື່ອຂໍເອົາບັດເຄດິດແບບມີຄໍ້າປະກັນ ທ່ານຄວນເບິ່ງວ່າ:

- ຄ່າບໍຣິການປະຈໍາປີນັ້ນ ຕໍ່າຫຼືບໍ່.
- ບໍ່ມີຄ່າໃບທະບຽນ, ຄ່າການບໍຣິການ, ຫຼືຄ່າເປັນສະມາຊິກ.
- ມີດອກເບັ້ຽສໍາລັບການເອົາເງິນຝາກໃນບັນຊີເງິນ.

## ບັດເຄດິດທີ່ບໍ່ມີຄໍ້າປະກັນ.

ຫຼາຍບໍຣິສັດເອົາບັດເຄດິດໃຫ້ບັນດາລູກຄ້າທີ່ບໍ່ມີຄໍ້າປະກັນ ຍ້ອນວ່າ ລູກຄ້າສ່ວນຫຼາຍບໍ່ເຄີຍມີປະວັດຂອງການຢືມເງິນ. ບັດເຄດິດດັ່ງກ່າວຈະມີຄ່າບໍຣິການແພງຍ້ອນວ່າ:

- ເງິນໃຫ້ຢືມມີໜ້ອຍ.
- ດອກເບັ້ຽສູງ.

- ຄ່າໃບທຳນຽມ, ຄ່າບໍລິການ ແລະ ຄ່າຝາກບັນຊີເງິນ ສ່ວນຫຼາຍ ເປັນລາຍງານບັນຊີສະບັບທຳອິດ.
- ຄ່າເປັນສະມາຊິກປະຈຳປີຫຼືປະຈຳເດືອນ.
- ຄ່າຂໍເງິນຢືມຂຶ້ນອີກເພີ້ມເຕີມ.

ຖ້າທ່ານຄິດຂໍເອົາບັດເຄດິດດັ່ງກ່າວ ທ່ານຄວນສຶກສາເບິ່ງຫຼາຍໆທະນາຄານກ່ອນ. ເອົາດອກເບັ້ຽຂອງແຕ່ລະທະນາຄານມາປຽບທຽບກັນເບິ່ງ. ສ່ວນຫຼາຍ ຄ່າບໍລິການຈະມີລາຄາເທົ່າກັນກັບເງິນທີ່ທະນາຄານໃຫ້ຢືມ ເພາະສະນັ້ນ ທ່ານຕ້ອງຈ່າຍຄ່າ ບໍລິການກ່ອນຈົນກວ່າທ່ານຈະມີເງິນໃນບັດເຄດິດໄດ້.

## ການບໍລິການບັດເຄດິດພິເສດ

ທະນາຄານທີ່ເອົາບັດເຄດິດໃຫ້ທ່ານມັກຈະຂາຍການບໍລິການພິເສດເພີ້ມເຕີມ ແລະ ສິ່ງຂອງຕ່າງອີກດ້ວຍ ເຊັ່ນ:

- ປະກັນໄພບັດເຄດິດ - ເງິນກ້ອນນີ້ສາມາດຈ່າຍໜີ້ສິນຂອງທ່ານໃນຍາມທ່ານໄດ້ລົ້ມເຈັບປ່ວຍຫຼືເປັນພິການ.
- ການຕິດຕາມເບິ່ງການໃຊ້ຈ່າຍບັດເຄດິດຕະຫຼອດຊາວສີ່ຊົ່ວໂມງ ເພື່ອສະກັດກັ້ນຄົນຂີ້ລັກ.
- ວາຣະສານ ແລະ ປື້ມຄູ່ພ່ອນ.

ການບໍລິການພິເສດດັ່ງກ່າວແມ່ນມີໄວ້ໃຫ້ທ່ານເລືອກຊື້ໄດ້ຫຼືບໍ່ຊື້ກໍ່ໄດ້. ທາງທະນາຄານບໍ່ປັດໃໝທ່ານແມ໊ແຕ່ຢ່າງໃດຖ້າທ່ານບໍ່ຢາກຊື້ເອົາການບໍລິການພິເສດດັ່ງນີ້.

## ສິດທິຂອງທ່ານ

Fair Credit Reporting Act ເປັນກົດໝາຍຂອງຣັຖບານທີ່ຈະຄອຍຕິດຕາມເບິ່ງອົງການລາຍງານປະວັດຂອງການຢືມເງິນຕ່າງໆ ແລະກໍ່ມີກົດບໍ່ໃຫ້ອົງການດັ່ງກ່າວນີ້ລາຍງານແບບຜິດໆ ແລະລາຍງານຂໍ້ຄວາມທີ່ບໍ່ຖືກຕ້ອງຈາກທະນາຄານຕ່າງໆ.

ທ່ານສາມາດຂໍເອົາລາຍງານປະວັດຂອງການຢືມເງິນຂອງທ່ານໄດ້ທຸກໆປີ ຈາກອົງການລາຍງານປະວັດຢືມເງິນ. ກົດເບິ່ງ "How do I get my credit report?" ເວລາທ່ານໄດ້ຮັບໜັງສືຈາກອົງການພວກນີ້ ໃຫ້ທ່ານກວດເບິ່ງໃຫ້ລະອຽດອ່ອນ ເຊັ່ນຣະຫັດຂອງບັນຊີເງິນທະນາຄານແລະປະວັດການຈ່າຍໜີ້ສິນ. ກວດເບິ່ງໝົດວ່າ ບັນຊີເງິນຕ່າງໆໃນອາດີດມີຄຳບອກວ່າ "closed at the consumer's request."

ທ່ານມີສິດທີ່ຈະແກ້ບັນຫາແລະເຣື່ອງລາວຕ່າງໆທີ່ທ່ານບໍ່ເຫັນດີນຳວ່າທາງອົງການລາຍງານເຄດິດລາຍງານຜິດ. ໜັງສືທີ່ທາງອົງການລາຍງານເຄດິດສົ່ງມາໃຫ້ທ່ານນັ້ນ ຈະມີໃບໜັງສືທີ່ທ່ານສາມາດຂຽນບອກອະທິບາຍວ່າ ອົງການລາຍງານເຄດິດລາຍງານຜິດ. ເຣື່ອງແບບນີ້ທ່ານຕ້ອງແກ້ມັນຢູ່ເປັນປະຈຳ.

ທາງອົງການລາຍງານເຄດິດຕ້ອງກວດເບິ່ງແລະແກ້ບັນຫານີ້ໃຫ້ທ່ານຢ່າງລະອຽດອ່ອນ ແລະລາຍງານເຣື່ອງລາວຕ່າງໆມາໃຫ້ທ່ານຮູ້ ສ່ວນຫຼາຍ ທ່ານຈະໄດ້ຮັບລາຍງານມາພາຍໃນ ເວລາ 30 ຫາ 45 ມື້.

ຖ້າທ່ານບໍ່ເຫນດີນຳກັບການລາຍງານຂອງອົງການດັ່ງກ່າວ ທ່ານສາມາດຂຽນປະມານ 100 ຄຳສັບ ອະທິບາຍເຫດຜົນຂອງທ່ານວ່າ ເຣື່ອງນັ້ນມັນເປັນຈັ່ງຊີ້ມັນຈັ່ງຊັ້ນ. ຂໍ້ອະທິບາຍຂອງທ່ານ ກໍ່ຈະຖືກເອົາເຂົ້າຮ່ວມໄວ້ນຳບັນຫາຂອງເຣື່ອງດັ່ງກ່າວ.

ທາງກົດໝາຍກໍ່ມີກຳນົດຄືກັນວ່າ ເຣື່ອງປະວັດການຢືມເງິນຕ່າງໆຂອງທ່ານ ມີອາຍຸເທົ່າໃດ ແລະດົນປານໃດທີ່ບັນຊີນີ້ ຈະໝົດອາຍຸ ເພາະ ບັນຫາຂອງການລາຍງານປະວັດຂອງການຢືມເງິນ ຕ່າງໆ ຈະມີຢູ່ໃນບັນຊີຂອງທ່ານຢູ່ຕະຫຼອດໄປ ເຖິງແມ່ນວ່າ ທ່ານຈະຈ່າຍໜີ້ສິນໝົດແລ້ວກໍ່ຕາມ. ຖ້າທ່ານແກ້ໄຂບັນຊີດັ່ງກ່າວດີ ເຣື່ອງນີ້ຈະມີຢູ່ໃນປະວັດທ່ານເປັນເວລາ 10 ປີ ຫຼັງຈາກທີ່ທ່ານ ໄດ້ຈ່າຍໜີ້ໝົດຫຼືທ່ານປິດບັນຊີເງິນ. ຖ້າທ່ານມີບັນຊີບໍ່ດີ ເຊັ່ນ ທ່ານຈ່າຍຊ້າບໍ່ຕົງວັນເວລາຈ່າຍໜີ້ ຫຼືປະຖິ້ມບັນຊີເງິນໃດບັນຊີນຶ່ງ, ລາຍງານນີ້ຈະຢູ່ໃນປະວັດທ່ານເຖິງ 7 ປີ ແລະເມື່ອທ່ານຂໍ ການລົ້ມລະລາຍ ລາຍງານນີ້ກໍ່ຈະມີຢູ່ໃນປະວັດຂອງທ່ານຄືກັນເຖິງເວລາ 10 ປີ.

## ໄປຕໍ່ວ່າຄວາມຢູ່ໃສ?

ຖ້າທ່ານຢາກຕໍ່ວ່າຄວາມກັບອົງການລາຍງານເຄດິດ, ຮ້ານຂັຍສິນຄ້າ ຫຼື ບໍຣິສັດທີ່ບໍ່ມີ FDIC ຄ້ຳປະກັນ, ທ່ານຂຽນໄປຍັງ Consumer Respon Center, Federal Trade Commission (FTC), Washington, DC 20580 ໄດ້. ທ່ານສາມາດຕໍ່ວ່າຄວາມທາງອອນໄລນ໌ກໍ່ໄດ້ ທີ່ www.ftc.gov.

ຖ້າທ່ານຢາກຕໍ່ວ່າຄວາມກ່ຽວກັບທະນາຄານໃດທະນາຄານນຶ່ງຫຼືບໍຣິສັດໃດບໍຣິສັດນຶ່ງ, ທ່ານສາມາດໂທໄປຖາມເອົາທີ່ຢູ່ແລະຊື່ນາມຂອງເຈົ້າໜ້າທີ່ຂອງອົງການທີ່ຕິດຕາມການບໍຣິການ ຂອງທະນາຄານຕ່າງໆໄດ້. ແລ້ວທ່ານຄວນສົ່ງໜັງສືໄປຫາອົງການດັ່ງກ່າວແລະສົ່ງໃບສຳເນົາໄປ ໃຫ້ທະນາຍຄວາມຂອງຣັຖຂອງທ່ານຮູ້.